ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ

ແລະ ແກ້ໄຂການລະບາດຂອງ COVID-19

ກອງເລຂາຄະນະສະເພາະກິດ

ເລກທີ3022/ສພກ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 5 ທັນວາ 2020

# ແຈ້ງການ

**ຮຽນ :** - ທ່ານ ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ແຂວງບໍ່ແກ້ວ.

- ທ່ານ ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ແຂວງຫຼວງນໍ້າທາ.

**ເລື່ອງ:** ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສໍາລັບເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ ແລະ ເຂດເສດຖະກິດພິເສດບໍ່ເຕັນ ແຂວງຫຼວງນໍ້າທາ.

- ອີງຕາມເອກະສານລາຍງານຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ແຂວງບໍ່ແກ້ວ, ສະບັບເລກທີ 1391/ສພກ.ບກ, ລົງວັນທີ 04 ທັນວາ 2020.
- ອີງຕາມ ຂໍ້ 5.1 ຂອງແຈ້ງການ ສະບັບເລກທີ 597/ຫສນຍ, ລົງວັນທີ 29 ພຶດສະພາ 2020 ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ.
- ອີງຕາມ ທິດຊີ້ນໍາຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນວັນທີ 04 ທັນວາ 2020.

ເນື່ອງຈາກມີສະພາບການລັກລອບເຂົ້າ-ອອກເມືອງຂອງບຸກຄົນຈາກປະເທດທີ່ມີການລະບາດຂອງເຊື້ອພະຍາດ COVID-19 ພາຍໃນຊຸມຊົນ ຜ່ານແຂວງບໍ່ແກ້ວ ແລະ ແຂວງຫຼວງນໍ້າທາ, ກອງເລຂາຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂໍຖືເປັນກຽດແຈ້ງທິດຊີ້ນໍາຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ມາຍັງທ່ານຊາບດັ່ງນີ້ :

1. **ໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງແຂວງ ບໍ່ແກ້ວ ປິດເມືອງຕົ້ນເຜິ້ງ ໂດຍບໍ່ອະນຸຍາດໃຫ້ຄົນ ເຂົ້າອອກ ໃນໄລຍະ 14 ວັນ ແລະ ປະຕິບັດ ມາດ**

ຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ. ພ້ອມກັນນີ້, ໃຫ້ເກັບຕົວຢ່າງທຸກຄົນ ທີ່ມີອາການທາງລະບົບຫາຍໃຈ ຫຼື ເປັນໄຂ້ ມາກວດວິເຄາະຫາເຊື້ອພະຍາດ COVID-19.

2. ໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງແຂວງຫຼວງນ້ຳທາ ປິດເຂດເສດຖະກິດພິເສດ ບໍ່ເຕັນ ໂດຍບໍ່ອະນຸຍາດໃຫ້ຄົນ ເຂົ້າອອກ ໃນໄລຍະ 14 ວັນ ແລະ ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ. ພ້ອມກັນນີ້, ໃຫ້ເກັບຕົວຢ່າງທຸກຄົນ ທີ່ມີອາການທາງລະບົບຫາຍໃຈ ຫຼື ເປັນໄຂ້ ມາກວດວິເຄາະຫາເຊື້ອພະຍາດ COVID-19.

3. ໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ ສົມທົບກັບພາກສ່ວນກ່ຽວຂ້ອງ ຮີບຮ້ອນຕິດຕາມເອົາ 07 ຄົນ ທີ່ເປັນຜູ້ສຳພັດໃກ້ຊິດໂດຍກົງກັບຄົນຈີນທີ່ລັກລອບເຂົ້າເມືອງ ເພື່ອມາກວດຫາເຊື້ອ COVID-19 ລວມທັງຜູ້ສຳພັດໃກ້ຊິດ ນຳ 07 ຄົນດັ່ງກ່າວ.

4. ໃຫ້ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງແຂວງ ບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ ເຂັ້ມງວດ ຕິດຕາມກວດກາຜູ້ຈະເດີນທາງເຂົ້າມາໃນແຂວງຂອງຕົນ ລວມທັງຜູ້ທີ່ຢູ່ໃນແຂວງຂອງຕົນ ຈະຕ້ອງໄດ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຮອງລັດຖະມົນຕີກະຊວງສາທາລະນະສຸກ
ຫົວໜ້າກອງເລຂາຄະນະສະເພາະກິດ
ຜູ້ປະຈຳການ

ບ່ອນນຳສົ່ງ:

| | |
|---|---|
| - ກະຊວງສາທາລະນະສຸກ | 01 ສະບັບ |
| - ກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ |
| - ກະຊວງ ປ້ອງກັນຄວາມສະຫງົບ | 01 ສະບັບ |
| - ກະຊວງປ້ອງກັນປະເທດ | 01 ສະບັບ |
| - ຄະນະສະເພາະກິດນະຄອນຫຼວງວຽງຈັນ ແລະ ບັນດາແຂວງ | 01 ສະບັບ |
| - ສຳເນົາ | 01 ສະບັບ |

ກະຊວງສາທາລະນະສຸກ
ລັດຖະມົນຕີ

ຮອງສາດສະດາຈານ ດຣ.ພູທອນ ເມືອງປາກ